# ສຶກສາການຈະເລີນເຕີບໂຕ ແລະ ຜົນຜະລິດຂອງເຂົ້າ 4 ແນວພັນ ໂດຍການນຳໃຊ້ຝຸ່ນຊີວະພາບ

# Study on Growth and Yield of 4 Rice Varieties with OrganicFertilizer

**ນັກສຶກສາ:** ນ. ວິໄລສິດ ໜໍ່ແກ້ວມະນີ

**ອາຈານຊີ້ນຳ:** ແປັນ ຫຼວງສັກດາ

**ພາກວິຊາ:** ປູກພືດ, ປີ 2009.

## ບົດຄັດຫຍໍ້

ຜ່ານການສຶກສາການຈະເລີນເຕີບໂຕ ແລະ ຜົນຜະລິດເຂົ້າ4 ແນວພັນໂດຍນຳໃຊ້ຝຸ່ນຊີວະພາບ ເຊິ່ງໄດ້ສຶກສາຢູ່ພື້ນທີ່ນາ ຂອງຊາວກະສິກອນ ບ້ານໜອງກອກ ເມືອງຄຳເກີດ ແຂວງບໍລິຄຳໄຊ ເຊິ່ງເປັນບ້ານເປົ້າໝາຍຈຸດສຸມ ຂອງໂຄງການພັດທະນາ ບໍລິສັດເທີນ - ຫີນບູນ ໃນການສຶກສາຄັ້ງນີ້ ແມ່ນໃຊ້ເວລາຢູ່ 7 ເດືອນເລີ່ມແຕ່ວັນທີ່ 15/04/09 - 16/10/09 ໂດຍມີຈຸດປະສົງ ເພື່ອສຶກສາການນຳໃຊ້ຝຸ່ນຊີວະພາບໃນການປູກເຂົ້ານາປີ ແລະ ເພື່ອສຶກສາປະສິດທິພາບ ຂອງຝຸ່ນຊີວະພາບ ຕໍ່ການຈະເລີນເຕີບໂຕ ແລະ ຜົນຜະລິດຂອງເຂົ້າ4 ແນວພັນ, ໃນແນວພັນທີ່ສຶກສາມີເຂົ້າຝຣັ່ງ, ເຂົ້າແພ່ແດງ, ເຂົ້າເຕ້ຍ (ກຂ16) ແລະ ເຂົ້າ ກ ຂ10 ມີເນື້ອທີ່ສຶກສາຢູ່ 6400 $m^2$ ໂດຍແຕ່ລະແນວພັນ ແມ່ນມີເນື້ອທີ່ສຶກສາ 1600 $m^2$, ປັກດຳເມື່ອອາຍຸກ້າໄດ້ 30 ວັນ ດ້ວຍໄລ່ຍະຫ່າງ 15 ຫາ 20 cm, ຂໍ້ ມູນທີ່ເກັບກຳລວມມີ: ວັນຕົກກ້າ, ວັນປັກດຳ, ຈຳນວນຕົ້ນ/ສຸມລວງສູງຂອງເຂົ້າ, ວັນອອກດອກ 50%, ຈຳນວນຮວງ/ສຸມ, ຈຳນວນເມັດ/ຮວງ, ຈຳນວນເມັດເຕັມ/ຮວງ, %ເມັດເຕັມ, ອາຍຸການເກັບກ່ຽວ, ວັນທີ່ເກັບກ່ຽວ, ນ້ຳໜັກ 1000 ເມັດ (g) ແລະ ຜົນຜະລິດ (kg/ha) ເຊິ່ງ ໄດ້ນຳໃຊ້ຝຸ່ນຊີວະພາບໃນປະລິມານ 200kg/ໄລ່ ໂດຍໄດ້ແບ່ງໃສ່ 3ຄັ້ງ: ຄັ້ງທີ່1: ໃສ່ໃນອັດຕາ100 kg/ໄລ່ ຫຼັງຈາກກຽມດິນແລ້ວ, ຄັ້ງທີ່2: ໃສ່ໃນອັດຕາ 50kg/ໄລ່ ເມື່ອເຂົ້າມີອາຍຸ 35 ວັນຫຼັງຈາກປັກດຳ ແລະ ຄັ້ງທີ່3: ໃສ່ໃນອັດຕາ 50 kg/ໄລ່ ເມື່ອເຂົ້າມີອາຍຸ 65 ວັນຫຼັງປັກດຳ ແລະ ໄດ້ມີການໃສ່ອີເອັມ (ຂະຫຍາຍ) ໃນນາເຂົ້າ 5 ຄັ້ງ ໂດຍໃສ່ໃນປະລິມານ 2 ລິດ/ໄລ່ ໃນທຸກໆ14 ວັນ ຈົນເຖິງເຂົ້າຖອກຮວງ ພາຍຫຼັງສຳເລັດການສຶກສາ ສາມາດເກັບກຳຂໍ້ມູນໄດ້ດັ່ງນີ້: ແນວພັນເຂົ້າຝຣັ່ງມີລະດັບຄວາມສູງ 89,83 cm ຄວາມສາມາດໃນການແຕກກໍມີ 9 ຕົ້ນ/ສຸມ ແລະ ໃຫ້ຜົນຜະລິດ 2.800 kg/ha ເຊິ່ງໃຫ້ຜົນກຳໄລ 1.586.500 ກີບ. ແນວພັນເຂົ້າແພ່ແດງ ມີລະດັບຄວາມສູງ 104,75 cm, ຄວາມສາມາດໃນການແຕກກໍມີ 9,2 ຕົ້ນ/ສຸມ ແລະ ໃຫ້ຜົນຜະລິດ 3.000 kg/ha ເຊິ່ງໃຫ້ຜົນກຳໄລ 1.910.500ກີບ. ແນວພັນເຂົ້າເຕ້ຍ(ກຂ16)ມີລະດັບຄວາມສູງ 82,45cm, ຄວາມສາມາດໃນການແຕກ ກໍມີ 8,4 ຕົ້ນ/ສຸມ ແລະ ໃຫ້ຜົນຜະລິດ 2.267 kg/ha, ເຊິ່ງໃຫ້ຜົນກຳໄລ 723.040 ກີບ. ແນວພັນເຂົ້າ ກ ຂ 10 ມີລະດັບຄວາມສູງ 91,91 cm, ຄວາມສາມາດໃນການແຕກກໍມີ 10,6 ຕົ້ນ/ສຸມ ແລະ ໃຫ້ຜົນຜະລິດ 2.733 kg/ha ເຊິ່ງໃຫ້ຜົນກຳໄລ 1.477.960ກີບ. ເມື່ອມາ ເບິ່ງຕາມຂໍ້ມູນແລ້ວ ເຫັນວ່າແນວພັນເຂົ້າແພ່ແດງມີຜົນໄດ້ຮັບ

ດີກວ່າໝູ່ຮອງລົງມາ ແມ່ນແນວພັນເຂົ້າຝຣັ່ງ ແລະ ແນວພັນເຂົ້າ ກ ຂ 10 ແມ່ນມີຜົນໄດ້ຮັບໃກ້ຄຽງກັນ ສ່ວນວ່າແນວພັນ ເຂົ້າເຕ້ຍ (ກ ຂ16) ແມ່ນມີຜົນ ໄດ້ຮັບຕ່ຳກວ່າໝູ່.